ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ
ສໍານັກງານ ຄຄຊ
ເລກທີ 593
ວັນທີ 9/6/2015
ໂທລະສັບ 021 217770

ເລກທີ: 22 /ທກ
ນະຄອນຫຼວງວຽງຈັນ, ວັນທີ: 05 JUN 2015

ລາຍງານການເຄື່ອນໄຫວປະຈໍາອາທິດ
ທີ 25/05/2015 ຫາ 29/05/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ,

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 19/05/2015 | ອາທິດນີ້ 26/05/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,1267 | 1,0922 | 3,15% |
| ໂດລາ/ເຢນ | 119,97 | 122,17 | -1,80% |
| ໂດລາ/ບາດ | 33,38 | 33,68 | -0,89% |
| ໂດລາ/ເປໂຊ | 44,51 | 44,68 | -0,39% |
| ໂດລາ/ຣູເປັຍ | 13.154,00 | 13.196,11 | -0,32% |
| ໂດລາ/ໂດລາສິງກະໂປ | 1,3288 | 1,3461 | -1,29% |
| ໂດລາ/ຢວນ | 6,2052 | 6,2035 | 0,03% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 0,10% ຈາກ 60,02 ໂດລາ/ບາເຣວ ມາເປັນ 60,08 ໂດລາ/ບາເຣວ ແຕ່ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,71% ຈາກ 1.221,24 ໂດລາ/ອອນ ມາເປັນ 1.200,38 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,38% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,25% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,29% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,13% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,42% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,04% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,39% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 2,49% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 19/04/2015 | | | ອາທິດນີ້ 26/05/2015 | | | % (+) ເງິນກີບແຂງ/(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.064,89 | 8.094,37 | 8.081,39 | 8.097,45 | 8.119,71 | 8.112,35 | -0,40% | -0,31% | -0,38% |
| ບາດ | 244,44 | 245,27 | 245,09 | 243,66 | 244,81 | 244,38 | 0,32% | 0,19% | 0,29% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.075,55 | 8.098,27 | 8.086,91 | 8.091,40 | 8.123,33 | 8.107,37 | -0,20% | -0,31% | -0,25% |
| ບາດ | 245,08 | 246,53 | 245,80 | 244,67 | 246,30 | 245,48 | 0,17% | 0,09% | 0,13% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,13% | 0,05% | 0,07% | -0,07% | 0,04% | -0,06% | | | |
| ບາດ | 0,26% | 0,52% | 0,29% | 0,41% | 0,61% | 0,45% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 2,36% ທຽບໃສ່ວັນທີ 22/05/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 39,78%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,12% ເມື່ອທຽບໃສ່ວັນທີ 22/05/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 23,02%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 25/05/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 16,56 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 88,88 ລ້ານໂດລາ ແລະ ຂາຍໂດລາໄດ້ 72,32 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 1.395,37 ລ້ານບາດ (ໃນນີ້ ຊື້ບາດໄດ້ 221,42 ລ້ານບາດ ແລະ ຂາຍບາດໄດ້ 1.616,80 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 60,63% ແຕ່ຫຼຸດລົງ 14,12% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 18,04 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 427,51 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 24,80 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 253,83 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 49,27 ລ້ານໂດລາ ແຕ່ ຊື້ບາດໄດ້ສຸດທິ ຈຳນວນ 1.645,20 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 19/05/2015 | | ອາທິດທີ 25/05/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 10,74 | 102,86 | 39,91 | 104,18 | 271,55% | 1,29% |
| - ທ/ຄທຸລະກິດອື່ນໆ | 48,62 | 200,65 | 48,97 | 117,24 | 0,73% | -41,57% |
| ລວມຊື້: | **59,36** | **303,52** | **88,88** | **221,42** | **49,74%** | **-27,05%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 19,31 | 293,77 | 50,82 | 174,97 | 163,24% | -40,44% |
| - ທ/ຄທຸລະກິດອື່ນໆ | 21,69 | 1.543,21 | 21,49 | 1.441,82 | -0,91% | -6,57% |
| ລວມຂາຍ: | **41,00** | **1.836,98** | **72,32** | **1.616,80** | **76,39%** | **-11,99%** |
| ຊື້-ຂາຍສຸດທິ ທທກ | 18,36 | -1.533,47 | 16,56 | -1.395,37 | -9,78% | -9,01% |
| ຜິດດ່ຽງ ຊື້-ຂາຍ | 30,93 | -505,24 | 18,64 | -630,18 | -122,33% | -124,76% |
| ມູນຄ່າການຊື້-ຂາຍ | 100,36 | 2.140,50 | 161,20 | 1.838,22 | 60,63% | -14,12% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 38,05 | 0,00 | 58,17 | | |
| - ທຫລ ຂາຍໃຫ້ ທທກ | 38,01 | 690,00 | 24,80 | 312,00 | | |
| ຊື້-ຂາຍສຸດທິ ທຫລ | **-38,01** | **-651,95** | **-24,80** | **-253,83** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **17,69** | **514,22** | **18,04** | **427,51** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,09 | 1.530,69 | 0,25 | 1.645,20 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 44,95 | 0,00 | 49,52 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-44,86** | **1.530,69** | **-49,27** | **1.645,20** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 05/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 0,92% ຫຼຸດລົງ 0,03% ຈາກ 0,95% ໃນເດືອນ 04/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 132,7 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 20,2% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 894 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 10,51% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 647,28 ຕື້ກີບ ຫຼຸດລົງ 13,77% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (22-28/05/2015) ມີຈໍານວນ 1.637 ຄັ້ງ ໂດຍມີມູນຄ່າ 288,22 ຕື້ກີບ ຫຼຸດລົງ 54,62% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 427 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.382,97 ຈຸດ ຫຼຸດລົງ 2,41% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 98.596 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 694,07 ລ້ານກີບ ຫຼຸດລົງ 78,82% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 57,87% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.483 ກີບ ເພີ່ມຂຶ້ນ 397 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.872 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 18,61 ລ້ານກີບ ຫຼຸດລົງ 98,73% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 25,46% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,67%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.103 ກີບ/ຮຸ້ນ ຫຼຸດລົງ 205 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 94,405 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 670,54 ລ້ານກີບ ຫຼຸດລົງ 55,45% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 59,59% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,30%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.300 ກີບ/ຮຸ້ນ, ໂດຍໃນອາທິດນີ້ມີການຊື້-ຂາຍພຽງແຕ່ວັນດຽວ. ມີປະລິມານຊື້-ຂາຍທັງໝົດ 5 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,41 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.706 ກີບ/ຮຸ້ນ ຫຼຸດລົງ 103 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.314 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,87 ລ້ານກີບ ຫຼຸດລົງ 98,41% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ່ລົງທຶນຕ່າງປະເທດສະເລ່ຍກວມເອົາ 30% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,72%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການຈັດສໍາມະນາໃນທາງປະຕິບັດ (ການເຮັດ Bank Agent) ລະຫວ່າງຜູ້ຄຸ້ມຄອງລະບຽບການຂອງ ສປປ ລາວ ແລະ ທະນາຄານກະສິກອນໄທ ຈໍາກັດ ໃຫ້ພະນັກງານ ທຫລ ຮັບຊາບ ທີ່ໂຮງແຮມ ລາວພຣາຊາ;
- ສໍາເລັດການຈັດກອງປະຊຸມເພື່ອເຜີຍແຜ່: ❶ ເຜີຍແຜ່ກົດໝາຍວ່າດ້ວຍ AML/CFT ເປັນຈໍານວນ 2 ຄັ້ງ ໃຫ້ແກ່ບັນດາຄະນະກົມ, ຄະນະອໍານວຍການ, ເຈົ້າໜ້າທີ່ເກັບກໍາຂໍ້ມູນ ແລະ ກວດກາ, ພະນັກງານທີ່ກ່ຽວຂ້ອງຂອງທະນາຄານທຸລະກິດ, ສະຖາບັນການເງິນ ທີ່ ທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການທະນາຄານ, ❷ ເຜີຍແຜ່ວຽກງານການເຊື່ອມໂຍງ ໃນຫົວຂໍ້: "ທະນາຄານມາດຖານອາຊຽນ ແລະ ການກະກຽມຄວາມພ້ອມເຂົ້າສູ່ AEC" ໃຫ້ແກ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ທີ່ ສະຖາບັນການທະນາຄານ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມວຽກງານຊຳລະສະສາງຂອງສູນ SEACEN ຄັ້ງທີ 14 ທີ່ປະເທດອິນເດຍ, ❷ ກອງປະຊຸມປຶກສາຫາລືທົບທວນການຮ່ວມມືສອງຝ່າຍລະຫວ່າງ ທຫລ ແລະ ທະນາຄານປະຊາຊົນຈີນ ທີ່ຄູນມິງ ປະເທດ ສປ. ຈີນ, ❸ ກອງປະຊຸມປຶກສາຫາລືກ່ຽວກັບ ເນື້ອໃນການສ້າງສັນຍາວ່າດ້ວຍການຮ່ວມມືທະວິພາຄີລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ. ຫວຽດນາມ ທີ່ ກະຊວງແຜນການ ແລະ ການລົງທຶນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ ສືບຕໍ່ຄົ້ນຄວ້າການສະເໜີຂໍຍົກເວັ້ນອັດຕາສ່ວນໃນການນຳໃຊ້ແຫຼ່ງທຶນໄລຍະສັ້ນ ເພື່ອປ່ອຍກູ້ໄລຍະຍາວ, ❺ ຄົ້ນຄວ້າຮ່າງດຳລັດວ່າດ້ວຍ ປົກປ້ອງຜູ້ບໍລິໂພກທາງການເງິນ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ເຂົ້າຮ່ວມກອງປະຊຸມສຳມະນາຢູ່ປະເທດ ສປ ຈີນ ໃນຫົວຂໍ້ "Financial Coorperation and Risk Management";
- ກະກຽມການຄັດເລືອກຜົນງານ 10 ປີ ຂອງກົມກອງ ແລະ ບຸກຄົນ (2005-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ